ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------------------------

ລັດຖະບານ

ເລກທີ: 155 /ລບ

ນະຄອນຫຼວງວຽງຈັນ, ວັນທີ 21-5-2013

# ດຳລັດ
## ວ່າດ້ວຍກອງທຶນຄວບຄຸມຢາສູບ

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມກົດໝາຍວ່າດ້ວຍການຄວບຄຸມຢາສູບ ສະບັບເລກທີ 07/ສພຊ, ລົງວັນທີ 26 ພະຈິກ 2009;
- ອີງຕາມໜັງສືສະເໜີຂອງ ລັດຖະມົນຕີວ່າການ ກະຊວງສາທາລະນະສຸກ ສະບັບເລກທີ 333 /ກຊສ, ລົງວັນທີ 13 ມີນາ 2012.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ, ໃນການສ້າງຕັ້ງ, ການຄຸ້ມຄອງ, ການນຳໃຊ້ ແລະການກວດກາກອງທຶນຄວບຄຸມຢາສູບ ເພື່ອລະດົມທຶນຈາກພາຍໃນ ແລະຕ່າງປະເທດ ຮັບໃຊ້ວຽກງານຄວບຄຸມຢາສູບ, ແນໃສ່ສົ່ງເສີມໃຫ້ພົນລະເມືອງລາວ ມີສຸຂະພາບແຂງແຮງດີ, ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະສ້າງສາພັດທະນາປະເທດຊາດ.

ລັດຖະບານແຫ່ງ ສ.ປ.ປ. ລາວ ສ້າງຕັ້ງກອງທຶນຄວບຄຸມຢາສູບ ຫລື ເອີ້ນຫຍໍ້ວ່າ "**ກຄສ**" ແມ່ນເພື່ອຜັນຂະຫຍາຍ ແລະຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຄວບຄຸມຢາສູບ.

**ມາດຕາ 2. ກອງທຶນຄວບຄຸມຢາສູບ**

ກອງທຶນຄວບຄຸມຢາສູບ ຂຽນຫຍໍ້ "ກຄສ" ແມ່ນກອງທຶນສົ່ງເສີມສຸຂະພາບ ທີ່ລັດຖະບານແຫ່ງ ສ.ປ.ປ. ລາວ ສ້າງຕັ້ງຂຶ້ນ ເພື່ອຜັນຂະຫຍາຍ ແລະຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຄວບຄຸມຢາສູບ ຊຶ່ງຢູ່ພາຍໃຕ້ການຊີ້ນຳໂດຍກົງ ຂອງຄະນະກຳມະການແຫ່ງຊາດເພື່ອການຄວບຄຸມຢາສູບ ທີ່ມີໜ້າທີ່ໃນການຄຸ້ມຄອງການເຄື່ອນໄຫວວຽກງານຂອງກອງທຶນ ໃຫ້ມີຄວາມໂປ່ງໃສ ແລະມີປະສິດທິຜົນສູງ.

**ມາດຕາ 3. ຫລັກການບໍລິຫານ**

ການບໍລິຫານກອງທຶນຄວບຄຸມຢາສູບ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

- ຮັບປະກັນການຕິດຕາມກວດກາ, ການສະຫລຸບ ແລະຕີລາຄາ ຢ່າງເປັນປົກກະຕິ ຕາມສົກປີງົບປະມານ;
- ຮັບປະກັນຄວາມໂປ່ງໃສ ໃນການບໍລິຫານ ແລະການນຳໃຊ້ກອງທຶນ.

**ມາດຕາ 4. ຂອບເຂດການນຳໃຊ້ຂອງດຳລັດ**

ດຳລັດສະບັບນີ້ ນຳໃຊ້ທົ່ວໄປສຳລັບບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງ ທີ່ພົວພັນກັບວຽກງານຄວບຄຸມຢາສູບ ຂອງ ສ.ປ.ປ. ລາວ.

## ໝວດທີ 2
## ແຫລ່ງລາຍຮັບ ແລະການນຳໃຊ້ກອງທຶນ

**ມາດຕາ 5. ແຫລ່ງລາຍຮັບ**

ກອງທຶນຄວບຄຸມຢາສູບ ມີລາຍຮັບ ຫລືການສະໜັບສະໜູນ ຈາກແຫລ່ງຕ່າງໆ ດັ່ງນີ້:

1. ງົບປະມານຂອງລັດ;
2. ເກັບໃນຮູບແບບອາກອນກຳໄລ ໂດຍເກັບສອງສ່ວນຮ້ອຍ (2%) ຂອງກຳໄລຂອງຜູ້ທີ່ດຳເນີນທຸລະກິດກ່ຽວກັບຜະລິດຕະພັນຢາສູບຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍສ່ວຍສາອາກອນ;
3. ບຸກຄົນ ແລະນິຕິບຸກຄົນ ທີ່ທຳການຜະລິດຢາສູບ ຢູ່ພາຍໃນປະເທດ ແລະ/ຫຼືນຳເຂົ້າຜະລິດຕະພັນຢາສູບສຳເລັດຮູບຈາກຕ່າງປະເທດ ຕ້ອງໄດ້ຈ່າຍ ສອງຮ້ອຍ (200) ກີບຕໍ່ໜຶ່ງຊອງ ເພື່ອວຽກງານສົ່ງເສີມສຸຂະພາບ;
4. ການບໍລິຈາກ ຫລືການປະກອບສ່ວນ ຂອງບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງພາຍໃນ, ຕ່າງປະເທດ ແລະສາກົນ;
5. ການເຄື່ອນໄຫວກິດຈະກຳຫາລາຍໄດ້ ເພື່ອວຽກງານຄວບຄຸມຢາສູບ ເຊັ່ນ: ການແຂ່ງຂັນກິລາກາຍຍະກຳ, ການສະແດງສິນລະປະວັນນະຄະດີ ແລະອື່ນໆ.

**ມາດຕາ 6. ການນຳໃຊ້ກອງທຶນ**

ກອງທຶນຄວບຄຸມຢາສູບ ແມ່ນໃຫ້ນຳໃຊ້ເຂົ້າໃນວຽກງານຕ່າງໆ ດັ່ງນີ້:

1. ໂຄສະນາເຜີຍແຜ່ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະນິຕິກຳຕ່າງໆ ລວມທັງ ສົນທິສັນຍາ ແລະສັນຍາສາກົນວ່າດ້ວຍການຄວບຄຸມຢາສູບ ທີ່ ສ.ປ.ປ. ລາວ ເປັນພາຄີ;
2. ຜະລິດສື່ໂຄສະນາ ແລະຈັດກິດຈະກຳໂຄສະນາຕ່າງໆ ໃຫ້ສັງຄົມຮັບຮູ້ ແລະໃຫ້ຄວາມຮ່ວມມື ໃນການຈຳກັດ ຜົນຮ້າຍຂອງການສູບຢາ ແລະຄວັນຢາສູບຕໍ່ສຸຂະພາບ;
3. ຊ່ວຍເຫຼືອບຳບັດຜູ້ທີ່ຕ້ອງການອອກຢາສູບ ຕາມຄວາມເໝາະສົມ;
4. ສ້າງສະພາບແວດລ້ອມປອດຄວັນຢາສູບ ໂດຍການຂະຫຍາຍເຂດປອດຄວັນຢາສູບ ເພື່ອສົ່ງເສີມສຸຂະພາບທີ່ດີ ຂອງພົນລະເມືອງ;
5. ການຄົ້ນຄວ້າກ່ຽວກັບຜົນກະທົບຂອງຢາສູບຕໍ່ສຸຂະພາບ, ເສດຖະກິດ ແລະສັງຄົມ;
6. ການສະກັດກັ້ນການຄ້າຂາຍຢາສູບເຖື່ອນ;
7. ປະຕິບັດນະໂຍບາຍຕໍ່ບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງ ທີ່ເຄື່ອນໄຫວດີເດັ່ນໃນຂະບວນການວຽກງານຄວບຄຸມຢາສູບ;
8. ຄຸ້ມຄອງບໍລິຫານກອງທຶນ ແລະຮັບໃຊ້ວຽກງານອື່ນທີ່ຈຳເປັນຕາມການຕົກລົງຂອງສະພາບໍລິຫານກອງທຶນ ແລະຄະນະກຳມະການແຫ່ງຊາດ ເພື່ອການຄວບຄຸມຢາສູບ;

9. ສຳລັບການເຄື່ອນໄຫວກິດຈະກຳຕ່າງໆ ຂອງວຽກງານຄວບຄຸມຢາສູບຕາມທີ່ກຳນົດ ແຕ່ຂໍ້ 1 ຫາ 8 ຂອງມາດຕານີ້ ສາມສິບເຈັດສ່ວນຮ້ອຍ (37%);
10. ປະກອບສ່ວນເຂົ້າຄັງປະກັນສຸຂະພາບແຫ່ງຊາດ ສາມສິບສອງສ່ວນຮ້ອຍ (32%);
11. ປະກອບສ່ວນໃນການປັບປຸງຄຸນນະພາບການບໍລິການ, ກໍ່ສ້າງ, ສ້ອມແປງ ແລະ ຈັດຊື້ເຄື່ອງມື ແລະອຸປະກອນການແພດທີ່ຈຳເປັນ ໃຫ້ແກ່ໂຮງໝໍລັດ ເພື່ອຮັບໃຊ້ການກວດ ແລະ ປິ່ນປົວພະຍາດ ທີ່ເກີດຈາກຜົນຮ້າຍຂອງຢາສູບ ຊາວຫ້າສ່ວນຮ້ອຍ (25%);
12. ການບໍລິຫານ ແລະ ການເຄື່ອນໄຫວທີ່ຈຳເປັນ ຂອງຄະນະກຳມະການແຫ່ງຊາດ ເພື່ອການຄວບຄຸມຢາສູບ ຫົກສ່ວນຮ້ອຍ (6%);
13. ສາມາດສະສົມ ແລະ ນຳໄປລົງທຶນ ທີ່ມີຄວາມສ່ຽງຕ່ຳ ເພື່ອສ້າງລາຍຮັບເພີ່ມເຕີມ ໃຫ້ກອງທຶນ.

**ມາດຕາ 7. ບັນຊີເງິນຝາກ**

ກອງທຶນຄວບຄຸມຢາສູບ ຕ້ອງເປີດບັນຊີເງິນຝາກຂອງຕົນ ໄວ້ນຳທະນາຄານ.

**ມາດຕາ 8. ການຖອນເງິນ**

ການຖອນເງິນອອກຈາກບັນຊີເງິນຝາກຂອງກອງທຶນ ຕ້ອງປະຕິບັດຕາມລະບຽບການຂອງກອງທຶນ ແລະ ທະນາຄານ.

ການຖອນເງິນອອກຈາກບັນຊີເງິນຝາກຂອງກອງທຶນ ແມ່ນບໍ່ໃຫ້ເກີນຍອດເຫຼືອຂອງກອງທຶນ ແລະ ຕ້ອງໃຫ້ມີເງິນແຮໄວ້ຢ່າງພຽງພໍ ໃນການສຳລະໜີ້ສິນຂອງກອງທຶນ.

## ໝວດທີ 3
## ການຄຸ້ມຄອງບໍລິຫານກອງທຶນຄວບຄຸມຢາສູບ

**ມາດຕາ 9. ສະພາບໍລິຫານ**

ສະພາບໍລິຫານກອງທຶນ ແມ່ນຄະນະກຳມະການແຫ່ງຊາດ ເພື່ອການຄວບຄຸມຢາສູບ ຊຶ່ງຖືກແຕ່ງຕັ້ງໂດຍນາຍົກລັດຖະມົນຕີ ແຫ່ງ ສປປ ລາວ.

**ມາດຕາ 10. ໜ້າທີ່ ແລະຂອບເຂດສິດ ຂອງສະພາບໍລິຫານ**

ສະພາບໍລິຫານ ມີໜ້າທີ່ ແລະຂອບເຂດສິດຕົ້ນຕໍ ດັ່ງນີ້:

1. ຄຸ້ມຄອງບໍລິຫານ ກອງທຶນຄວບຄຸມຢາສູບ ເພື່ອຜັນຂະຫຍາຍ ແລະຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ລະບຽບການອື່ນຂອງກອງທຶນ ແລະລະບຽບກົດໝາຍທີ່ກ່ຽວຂ້ອງ;
2. ພິຈາລະນາຜ່ານ ແລະ ຮັບຮອງເອົາແຜນການ, ແຜນງົບປະມານ ແລະ ໂຄງການ ການເຄື່ອນໄຫວປະຈຳປີ ຂອງກອງທຶນ;
3. ອອກລະບຽບກ່ຽວກັບການເຄື່ອນໄຫວພາຍໃນຂອງກອງທຶນ;
4. ແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຫົວໜ້າ ແລະ ຮອງຫ້ອງການກອງທຶນ;
5. ລະດົມຂົນຂວາຍ ແລະຊອກຫາແຫລ່ງທຶນ ຈາກບຸກຄົນ ແລະການຈັດຕັ້ງພາຍໃນ ແລະຕ່າງປະເທດປະກອບໃຫ້ກອງທຶນ;

6. ຕິດຕາມ, ກວດກາ ແລະ ຄຸ້ມຄອງການເຄື່ອນໄຫວ ແລະນຳໃຊ້ກອງທຶນ ຂອງຄະນະອຳນວຍການກອງທຶນ ໃຫ້ສອດຄ່ອງກັບເປົ້າໝາຍແຜນການ, ມີຄວາມໂປ່ງໃສ ແລະມີປະສິດທິຜົນສູງ;
7. ສະຫລຸບລາຍງານ ສະພາບການເຄື່ອນໄຫວວຽກງານຮອບດ້ານ ຂອງກອງທຶນ.

**ມາດຕາ 11. ກອງປະຊຸມສະພາບໍລິຫານ**

ກອງປະຊຸມສາມັນ ຂອງສະພາບໍລິຫານ ຈັດຂຶ້ນປີລະ ສອງ ຄັ້ງ, ໃນກໍລະນີມີບັນຫາສຳຄັນ ທີ່ຕ້ອງໄດ້ປຶກສາຫາລື ແລະພິຈາລະນາຕົກລົງດ່ວນ ກໍສາມາດຈັດກອງປະຊຸມວິສາມັນຂຶ້ນໄດ້ທຸກເວລາ ຕາມການຮຽກປະຊຸມຂອງປະທານສະພາບໍລິຫານ ຫຼື ຕາມການສະເໜີຂອງສະມາຊິກສະພາບໍລິຫານ ແຕ່ສອງຄົນຂຶ້ນໄປ. ກອງປະຊຸມຈະເປີດຂຶ້ນໄດ້ກໍຕໍ່ເມື່ອ ມີສະມາຊິກສະພາບໍລິຫານເຂົ້າຮ່ວມຢ່າງໜ້ອຍ ສອງສ່ວນສາມຂອງຈຳນວນສະມາຊິກສະພາບໍລິຫານທັງໝົດ.

**ມາດຕາ 12. ເບັ້ຍເຂົ້າຮ່ວມປະຊຸມ**

ສະມາຊິກສະພາບໍລິຫານ ທີ່ເຂົ້າຮ່ວມກອງປະຊຸມສະພາບໍລິຫານ ຈະໄດ້ຮັບເບັ້ຍເຂົ້າຮ່ວມປະຊຸມ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການເງິນຂອງກອງທຶນ.

**ມາດຕາ 13. ຫ້ອງການກອງທຶນຄວບຄຸມຢາສູບ**

ຫ້ອງການກອງທຶນຄວບຄຸມຢາສູບ ຂຽນຫຍໍ້ວ່າ "ຫກຢສ" ສັງກັດຢູ່ກະຊວງສາທາລະນະສຸກ, ມີພາລະບົດບາດເປັນເສນາທິການຊ່ວຍວຽກ ສະພາບໍລິຫານກອງທຶນ ໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດວຽກງານກອງທຶນຄວບຄຸມຢາສູບ.

ຫ້ອງການກອງທຶນຄວບຄຸມຢາສູບ ປະກອບດ້ວຍ ຫົວໜ້າ, ຮອງຫົວໜ້າ ແລະ ພະນັກງານຈຳນວນໜຶ່ງ ຕາມຄວາມເໝາະສົມ.

**ມາດຕາ 14. ໜ້າທີ່ ແລະຂອບເຂດສິດ ຂອງຫົວໜ້າຫ້ອງການກອງທຶນ**

ຫົວໜ້າຫ້ອງການກອງທຶນ ມີໜ້າທີ່ ແລະຂອບເຂດສິດຕົ້ນຕໍດັ່ງນີ້:

1. ຮ່າງແຜນງານ, ໂຄງການ ແລະແຜນງົບປະມານ ຮັບໃຊ້ການເຄື່ອນໄຫວ ແລະລະດົມຂົນຂວາຍທຶນເຂົ້າກອງທຶນ ປະຈຳ ທີກ ເດືອນ ແລະປະຈຳປີ ສະເໜີຕໍ່ສະພາບໍລິຫານ ເພື່ອພິຈາລະນາຮັບຮອງເອົາ;
2. ຮ່າງລະບຽບການພາຍໃນຂອງກອງທຶນ ສະເໜີຕໍ່ສະພາບໍລິຫານ ເພື່ອພິຈາລະນາປະກາດໃຊ້;
3. ຄຸ້ມຄອງບໍລິຫານ ການເຄື່ອນໄຫວວຽກງານປະຈຳວັນ ຂອງກອງທຶນໃຫ້ສອດຄ່ອງກັບເປົ້າໝາຍແຜນການດ້ວຍຄວາມໂປ່ງໃສ ແລະມີປະສິດທິຜົນສູງ;
4. ຈັດຕັ້ງກິດຈະກຳປຸກລະດົມຂົນຂວາຍ ແລະຊອກຫາແຫລ່ງທຶນ ໃຫ້ແກ່ກອງທຶນ;
5. ຮັບສະໝັກ, ຄັດເລືອກ ແລະບັນຈຸຊັບຊ້ອນພະນັກງານ ເຂົ້າເຮັດວຽກໃນກອງທຶນ ຕາມການເຫັນດີຂອງສະພາບໍລິຫານ;
6. ສະຫລຸບລາຍງານສະພາບການເຄື່ອນໄຫວວຽກງານຮອບດ້ານຂອງກອງທຶນ ຕໍ່ສະພາບໍລິຫານ ເພື່ອຊາບ ແລະຊີ້ນຳ ຢ່າງເປັນປົກກະຕິ;
7. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມການມອບໝາຍ ຂອງສະພາບໍລິຫານ.

## ໝວດທີ 4
## ການກວດສອບ ແລະລະບອບການລາຍງານ

**ມາດຕາ 15. ການກວດສອບບັນຊີ**

ບັນຊີຂອງກອງທຶນຄວບຄຸມຢາສູບ ຕ້ອງໄດ້ຮັບການກວດສອບທຸກໆປີ ໂດຍອີງການກວດສອບບັນຊີຂອງລັດ, ໃນກໍລະນີພົບເຫັນມີການກະທຳຜິດ, ຜູ້ທີ່ລະເມີດ ຕ້ອງຖືກດຳເນີນຄະດີຕາມລະບຽບກົດໝາຍ ຂອງ ສ.ປ.ປ. ລາວ.

**ມາດຕາ 16. ການລາຍງານ**

ຫົວໜ້າຫ້ອງການກອງທຶນ ຕ້ອງສົ່ງບົດລາຍງານການເຄື່ອນໄຫວຂອງກອງທຶນ ໃຫ້ສະພາບໍລິຫານຢ່າງເປັນປະຈຳ. ການລາຍງານທາງດ້ານການເງິນປະຈຳປີ ຕ້ອງປະຕິບັດຕາມລະບອບການລາຍງານ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 17. ເຄື່ອງໝາຍ ແລະຕາປະທັບ**

ສະພາບໍລິຫານ ແລະ ຫ້ອງການກອງທຶນຄວບຄຸມຢາສູບ ມີເຄື່ອງໝາຍ ແລະຕາປະທັບເປັນຂອງຕົນເອງ ເພື່ອນຳໃຊ້ເຂົ້າໃນການ ເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 18. ການຈັດຕັ້ງປະຕິບັດ**

ຄະນະກຳມະການແຫ່ງຊາດ ເພື່ອການຄວບຄຸມຢາສູບ ມີໜ້າທີ່ຈັດຕັ້ງການເຜີຍແຜ່ແນະນຳ ແລະຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ໄດ້ຮັບຜົນດີ ແລະລາຍງານສະພາບການເຄື່ອນໄຫວຮອບດ້ານ ຂອງກອງທຶນຄວບຄຸມຢາສູບ ໃຫ້ລັດຖະບານຊາບ ປີລະ ສອງ (2) ຄັ້ງ.

ກະຊວງການເງິນມີໜ້າທີ່ຈັດຕັ້ງປະຕິບັດການເກັບເງິນ ທີ່ໄດ້ຈາກແຫຼ່ງລາຍຮັບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 5 ຂໍ້ 1, 2 ແລະ 3 ຂອງດຳລັດສະບັບນີ້ ແລ້ວມອບເຂົ້າກອງທຶນຄວບຄຸມຢາສູບ.

ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 19. ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະບານ ແຫ່ງ ສ.ປ.ປ.ລາວ
ນາຍົກລັດຖະມົນຕີ,

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

ທອງສິງ ທຳມະວົງ